ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສໍານັກງານໃຫຍ່

ເລກທີ: 355 /ທຄຕລ 2022
ນະຄອນຫຼວງວຽງຈັນ, ວັນທີ: 17 FEB 2022

# ໜັງສືແຈ້ງເຊີນ

**ເຖິງ** : ບັນດາບໍລິສັດ,ໂຮງພິມພາກລັດ ແລະ ເອກະຊົນ ໃນນະຄອນຫຼວງວຽງຈັນ.
**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາແບບຟອມ ທຄຕລ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງທ່ານຊາບວ່າ ທຄຕລ ຈະໄດ້ປະເມີນຄັດເລືອກຜູ້ສະໜອງ ແບບຟອມ ແລະ ສິ່ງພິມ ຈໍານວນ 41 ລາຍການ, ລາຍລະອຽດຕິດຄັດດ້ານຫລັງ ເພື່ອມານໍາໃຊ້ເຂົ້າໃນວຽກງານວິຊາສະເພາະຂອງ ທະນາຄານ ຈຶ່ງໄດ້ແຈ້ງເຊີນມາຍັງທ່ານເພື່ອຍື່ນຊອງເຂົ້າຮ່ວມປະມູນສິ່ງພິມ ແລະ ແບບຟອມ ດັ່ງມີລາຍລະອຽດຂ້າງລຸ່ມນີ້:

- **ເງື່ອນໄຂຂອງບໍລິສັດ, ໂຮງພິມພາກລັດ ແລະ ເອກະຊົນ ມີຄວາມຕ້ອງການຍື່ນຊອງປະມູນຕ້ອງປະກອບດັ່ງນີ້:**
- **<u>ເອກະສານ ຊອງທີ່1:</u>**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດໍາເນີນທຸລະກິດດ້ານສິ່ງພິມ, ດໍາເນີນທຸລະກິດ ຢ່າງໜ້ອຍ 03 ປີຂຶ້ນໄປ, ສໍາເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2021.
2. ບັນດາໂຮງພິມທີ່ສົນໃຈເຂົ້າຮ່ວມປະມູນແມ່ນຕ້ອງສະເໜີລາຍການ ທີ່ຕ້ອງການເຂົ້າຮ່ວມປະມູນ ແລະ ໃຫ້ລະບຸລະອຽດ: ຂະໜາດ ຄຸນນະພາບ, ຍີ່ຫໍ້ວັດສະດຸ, ກໍານົດເວລາຈັດສົ່ງສິນຄ້າ, ການຮັບປະກັນສິນຄ້າແຕ່ລະລາຍການໃຫ້ຊັດເຈນ ແລະ ຂໍ້ມູນຕ່າງໆ ຕາມ format ທີ່ຕິດຄັດມາພ້ອມນີ້ ແລະ ຍື່ນກ່ອນ **ວັນທີ 23/02/2022 ເວລາ 11:00 ໂມງ** ໂດຍການສົ່ງຟາຍເຂົ້າ **E-mail**: procurement@bcel.com.la
3. ກໍານົດຍື່ນລາຍລະອຽດສິນຄ້າ, ການຮັບປະກັນສິນຄ້າ ແລະ ກໍານົດຍື່ນຊອງຕົວຢ່າງເຈ້ຍ/ແບບຟອມ ມາພ້ອມຢ່າງໜ້ອຍຕົວຢ່າງລະ 1 ຫົວ/ອັນ/ຊຸດ ( ຕາມຂະໜາດແບບຟອມຂອງ ທຄຕລ ທີ່ນໍາໃຊ້ປະຈຸບັນ, ສໍາລັບເຈ້ຍ A4 ຕ້ອງເປັນເຈ້ຍຄຸນນະພາບ ເກຼດA) ຈະຕ້ອງມາສົ່ງທີ່ ພະແນກຫ້ອງການບໍລິຫານ-ການເງິນ ສໍານັກງານໃຫຍ່, ປ່ອງບໍລິການຂາອອກ-ຂາເຂົ້າ ຕຶກ C ຊັ້ນ 4.

- **<u>ເອກະສານ ຊອງທີ່2:</u> (ປິດຊອງ)**

1. ໃບສະເໜີລາຄາໃຫ້ລະບຸລາຄາຫົວໜ່ວຍແຕ່ລະລາຍການ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ.
2. ໃນວັນພຸດ **ວັນທີ 02/03/2022 ເວລາ 09:30 ໂມງ** ແຈ້ງໃຫ້ບໍລິສັດ, ໂຮງພິມພາກລັດ ແລະ ເອກະຊົນ ຈະຕ້ອງຖືຊອງລາຄາມາສົ່ງທີ່ ພະແນກຫ້ອງການບໍລິຫານ-ການເງິນ ສໍານັກງານໃຫຍ່, ປ່ອງບໍລິການຂາອອກ-ຂາເຂົ້າ ຕຶກ C ຊັ້ນ 4.

- **<u>ໝາຍເຫດ:</u>** ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກໍານົດຂ້າງເທິງ.



ເລກທີ 01, ຖະໜົນ: ປາງຄໍາ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ, ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245. Website: http://www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

❖ **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

1. ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຮັບຜິດຊອບຄ່າທຳນຽມໃນການຈົດທະບຽນສັນຍາ.
2. ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ແມ່ນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.

**ການຊຳລະຈະຈ່າຍເປັນງວດດຽວ 100 %** ຂອງມູນຄ່າ ພາຍຫຼັງໄດ້ຮັບເຄື່ອງຄົບຖ້ວນ, ໄດ້ຮັບການຢັ້ງຢືນຈາກພາກສ່ວນກ່ຽວຂ້ອງ ແລະ ກວດກາຄວາມຖືກຕ້ອງຈາກຄະນະກຳມະການຕິດຕາມກວດກາ ພາຍໃນ 20 ວັນລັດຖະການ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອຳນວຍການ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ຄຳພຸດ ສິດທິລາດ

# (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ …………/ທຄຕລ, ລົງວັນທີ …………………..

| ລ/ດ | ຜູ້ສະໜອງ | ເນື້ອໃນ | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ 2020 | ໃບອະນຸຍາດດຳເນີນທຸລະກິດ 2021 | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປະເທດຜະລິດ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນ) | |
| 1 | ບ/ສ……… | (xxx/ 02.01.2015) | (xxx/ 02.01.2015) | (xxx/ 02.01.2015) | …. ປີ | (ໃຫ້ລະບຸ) | | ປະເທດ……. | …. ປີ | …… | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ ……………………

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:

ຊື່:

ໂທ:

# ລາຍການປະມູນແບບຟອມ ທຄຕລ ປະຈຳປີ 2022

| ລ/ດ | ລາຍການ | ຂະໜາດ | ການຫຸ້ມຫໍ່ | ຫ/ໜ | ຈ/ນ ຜະລິດຕໍ່ຄັ້ງ | ໄລຍະ ເວລາ ການຈັດ | ການ ຮັບປະກັນ ສິນຄ້າ | ການຈັດພິມ |
|---|---|---|---|---|---|---|---|---|
| 1 | ຢາງລັອກ ສີແດງລ້ວນ ພິມໂລໂກ້ ທຄຕລ 01 ຈຸດ<br>-Serial Number 09 ຕົວເລກ ສີຂາວ<br>- Serial Number 00000xxxx-xxxxxx<br>-Material: PP<br>-Total Length: 300 mm<br>-Printing area (ຂະໜາດໂລໂກ້): 48*25 mm<br>-Average tensile strength (ຄວາມແຮງ): 245 N<br>-Packing 1.000 PCS<br>-Carton dimension | -(ຂະໜາດບັນຈຸ): 40*26.5*27 cm | - ທຸກເສັ້ນຈະມີເລກລຳດັບ (9 ຕົວເລກ) = ຕົວຢ່າງ 000000001 - 000010000<br>- ແພັກຖົງລະ 50 ເສັ້ນ = 200 ຖົງ, ແຕ່ລະຖົງໝາຍເລກລຳດັບ 1-200 ພ້ອມລະບຸເລກ Serial Number ໃສ່ຖົງດ້ານໜ້າ | ເສັ້ນ | **10.000** | | | |
| 2 | ເຈ້ຍກໍ້ຮູດ EDC ກໍ້ນ້ອຍ s90 | ກວ້າງ 5,7ຊມ, ຜ່າສູນກາງ 3,7ຊມ, ຮູແກນ 1,2 ຊມ, ເຈ້ຍເທີ້ມໍ 54gsm ພິມ 1 ສີ | 100 ກໍ້/ແກັດ | ກໍ້ | **5.000** | | | |
| 3 | ກໍ້ເຈ້ຍໃບບິນ ATM | 80*180ມມ, ເຈ້ຍເທີ້ມໍ 65gsm, ພິມ 4 ສີ, ແກນຮອບໃນ 2,6 ຊມ | 8 ກໍ້/ແກັດ | ກໍ້ | **1.000** | | | |
| 4 | ກໍ້ເຈ້ຍປອກຮັດເງິນ 80 ມ | 20*76ມມ, ຍາວ 80ມ, 40ກໍ້/ແກັດ, ຮູແກນຮອບນອກ 10,5 ຊມ | 40 ກໍ້/ແກັດ | ແກັດ | **400** | | | |
| 5 | ກໍ້ເຈ້ຍປອກຮັດເງິນ 100ມ | 20*76ມມ, ຍາວ 100ມ, 40ກໍ້/ແກັດ | 40 ກໍ້/ແກັດ | ແກັດ | **400** | | | |
| 6 | ເຈ້ຍກົດບັດຄິວ_ກໍ້ນ້ອຍ | ກວ້າງ 7,9 ຊມ, ຜ່າກາງ 8 ຊມ, ເຈ້ຍເທີ້ມໍ 54 gsm, ຮູແກນຮອບໃນ 2 ຊມ | 50 ກໍ້/ແກັດ | ກໍ້ | **3.000** | | | |
| 7 | ເຈ້ຍພິມຫົວຈົດໝາຍພາສາອັງກິດ (ບໍ່ມີເລກທີ) | ຂະໜາດ A4 21*29,7 ຊມ, ເຈ້ຍປອນ 80 gsm, ພິມ 4 ສີ 1 ໜ້າ | 100 ໃບ/ຫໍ່ນ້ອຍ, 5 ຫໍ່ນ້ອຍ/ແພັກ, 5 ແພັກ/ມັດ | ໃບ | **4.000** | | | |
| 8 | ເຈ້ຍພິມຫົວຈົດໝາຍພາສາລາວ (ມີເລກທີ) | ຂະໜາດ A4 21*29,7 ຊມ, ເຈ້ຍປອນ 80 gsm, ພິມ 4 ສີ 1 ໜ້າ | 100 ໃບ/ຫໍ່ນ້ອຍ, 5 ຫໍ່ນ້ອຍ/ແພັກ, 5 ແພັກ/ມັດ | ໃບ | **30.000** | | | |
| 9 | ເຈ້ຍເອຕິແກັດ ແບບອ່ອນ | ເຈ້ຍປອນ 55gsm ຂະໜາດ 6,5 * 10cm, ພິມ 1 ສີ 1ໜ້າ | 5.000 ໃບ/ແກັດ | ໃບ | **50.000** | | | |
| 10 | ເຈ້ຍເອຕິແກັດຕິດໂຄ້ນເງິນໃບ 1.000 | ເຈ້ຍກ່ອງແປ້ງ-ຫຼັງເທົາ 300gsm, ຂະໜາດ 15,6*6,8ຊມ, 1.000 ໃບ/ຫໍ່: ພິມ 1 ສີ 1 ໜ້າ | 1.000 ໃບ/ຫໍ່ | ຫໍ່ | **5** | | | |
| 11 | ເຈ້ຍເອຕິແກັດຕິດໂຄ້ນເງິນໃບ 20.000 | | 1.000 ໃບ/ຫໍ່ | ຫໍ່ | **10** | | | |
| 12 | ເຈ້ຍເອຕິແກັດຕິດໂຄ້ນເງິນໃບ 50.000 | | 1.000 ໃບ/ຫໍ່ | ຫໍ່ | **100** | | | |
| 13 | ເຈ້ຍເອຕິແກັດຕິດໂຄ້ນເງິນໃບ 100.000 | | 1.000 ໃບ/ຫໍ່ | ຫໍ່ | **50** | | | |
| 14 | ເຈ້ຍໜີບຫົວເງິນ | ເຈ້ຍປອນ 60gsm, ຂະໜາດ 5*9 ຊມ, 30 ກລ/ແກັດ | 10 ກິໂລ/ແກັດ | ແກັດ | **10** | | | |

| | | | | | | | | |
|---|---|---|---|---|---|---|---|---|
| 15 | ຊອງຂາວຍາວ | 23,5*10,2 ຊມ, ພິມ 4 ສີ 1 ໜ້າ | 50 ຊອງ/ແພັກ, 10ແພັກ/ແກັດ | ຊອງ | **10.000** | | | |
| 16 | ຊອງເຫຼືອງນ້ອຍ A5 | 10" * 7" ພິມ 4 ສີ 1 ໜ້າ | 50 ຊອງ/ແພັກ, 10ແພັກ/ແກັດ | ຊອງ | **20.000** | | | 2 ຄັ້ງ (ຄັ້ງລະ 10.000) |
| 17 | ຊອງເຫຼືອງກາງ A4 | 9" * 12" 3/4, ພິມ 4 ສີ 1 ໜ້າ | 50 ຊອງ/ແພັກ, 10ແພັກ/ແກັດ | ຊອງ | **100.000** | | | 2 ຄັ້ງ (ຄັ້ງລະ 50.000) |
| 18 | ເທບກາວຕິດຫົວແຊັກ | ເຈ້ຍສະຕິກເກີ້ລຸ້ນໜາ-ໜຽວ ສີແດງກ່ານ 2,5*8,5ຊມ | 50 ອັນ/ຫໍ່ | ອັນ | **20.000** | | | |
| 19 | ຟອມຂໍນຳໃຊ້ເງິນກູ້ 3 (ສາຂາ) | ເຈ້ຍປອນ 55gsm, ຂະໜາດ 21*29,7 ຊມ ພິມ 4 ສີ 1ໜ້າ | 500 ໃບ/ຫໍ່ | ໃບ | **10.000** | | | |
| 20 | ແບບຟອມໂອນເງິນດ່ວນ Moneygram (ສົ່ງ) | ເຈ້ຍເຄມີ 2 ໃບ/ຊຸດ, ຂະໜາດ 21*29,7 ຊມ, ພິມ 4 ສີ-ດ້ານໜ້າ, ດ້ານຫຼັງພິມ 4 ສີ (ທັງສອງໃບ) ກາວຫົວ, 50 ຊຸດ/ຫົວ | 10 ຫົວ/ຫໍ່ | ຫົວ | **500** | | | |
| 21 | ແບບຟອມໂອນເງິນດ່ວນ Moneygram (ສົ່ງ) | ເຈ້ຍເຄມີ 2 ໃບ/ຊຸດ, ຂະໜາດ 21*29,7 ຊມ, ພິມ 4 ສີ-ດ້ານໜ້າ, ດ້ານຫຼັງພິມ 1 ສີ (ທັງສອງໃບ) ກາວຫົວ, 50 ຊຸດ/ຫົວ | 10 ຫົວ/ຫໍ່ | ຫົວ | **500** | | | |
| 22 | ໃບແຈ້ງປະເພດເງິນມອບ-ແດງ | ເຈ້ຍປອນ 55gsm, ຂະໜາດ 9*20,5ຊມ ພິມ 1 ສີ 1 ໜ້າ | 50ໃບ/ຫົວ, 10 ຫົວ/ຫໍ່, 5 ຫໍ່/ແພັກ | ຫົວ | **1.000** | | | |
| 23 | ໃບແຈ້ງປະເພດເງິນຮັບ-ຟ້າ | ເຈ້ຍປອນ 70gsm, ຂະໜາດ 9*19,5ຊມ ພິມ 1 ສີ 1 ໜ້າ | 50ໃບ/ຫົວ, 10 ຫົວ/ຫໍ່, 5 ຫໍ່/ແພັກ | ຫົວ | **3.000** | | | |
| 24 | ແຟັມ ທຄຕລ | ເຈ້ຍມັນ 310 gsm ເຄືອບດ້ານ 1 ໜ້າ, 23*31 ຊມ ໄດຄັດ ພິມ 4 ສີ | 50 ອັນ/ຫໍ່, 5ຫໍ່/ມັດ | ອັນ | **3.000** | | | |
| 25 | ຊອງຂາວໃສ່ບັດ ATM (ຊອງຂາວ + ແຜ່ນໃສ), ກາວ 02 ໜ້າ | ພິມ 1 ສີ 1 ໜ້າ, ຊອງ 9*5.8 ຊມ, ຂະໜາດແຜ່ນໃສ 7.5*2 ຊມ | 50 ຊອງ/ແພັກ, 10 ແພັກ/ແກັດ | ຊອງ | **100.000** | | | |
| 26 | ຂາຕັ້ງ One Pay 3 ແຈ: ແຜ່ນພາສ໌ຕິກ + ພິມສະຕິກ 4 ສີ + ແຜ່ນສະຕິກເກີ້ໃສຕິດບາໂຄດ 7*7 | 12*10.6*17 ຊມ+ 4 cm (ຕີນຕັ້ງ), ແຜ່ນສະຕິກເກີ້ໃສຕິດບາໂຄດ 7*7 | ແພັກຕິດກັນ (ແຜ່ນພາດສະຕິກ+ແຜ່ນສະຕິກເກີ້ໃສ) ຈຳນວນ 10 ຊຸດ/ແພັກ, 05 ແພັກ ຕໍ່ ແກັດ "ພ້ອມລະບຸຕົວຢ່າງສິນຄ້າດ້ານນອກກ່ອງ" | ຊຸດ | **2.000** | | | |
| 27 | ຂາໜີບ One Pay: ຂາໜີບແດງ + ແຜ່ນພາສ໌ຕິກ + ພິມສະຕິກ 4 ສີ + ແຜ່ນສະຕິກເກີ້ໃສຕິດບາໂຄດ 6,5*6,5 | 10,5*14,8 ຊມ + ຂາໜີບແດງ | ແພັກຕິດກັນ (ແຜ່ນພາດສະຕິກ+ແຜ່ນສະຕິກເກີ້ໃສ) ແລະ ແພັກແຍກ ຊຸດຂາຫນີບສີແດງ ຈຳນວນ ຢ່າງລະ 10 ຊຸດ/ແພັກ, 05 ແພັກ ຕໍ່ ແກັດ (03 ລາຍການ ໃສ່ແກັດດຽວກັນ) ພ້ອມລະບຸຕົວຢ່າງສິນຄ້າດ້ານນອກກ່ອງ. | ຊຸດ | **5.000** | | | 2 ຄັ້ງ (ຄັ້ງລະ 2.500) |
| 28 | ຂາຕັ້ງ One Pay: ແຜ່ນພາສ໌ຕິກ + ພິມສະຕິກ 4 ສີ + ແຜ່ນສະຕິກເກີ້ໃສຕິດບາໂຄດ 8,5*8,5 | 15*21 ຊມ + 5 cm (ຕີນຕັ້ງ) | ແພັກຕິດກັນ (ແຜ່ນພາດສະຕິກ+ແຜ່ນສະຕິກເກີ້ໃສ) ຈຳນວນ 10 ຊຸດ/ແພັກ, 05 ແພັກ ຕໍ່ ແກັດ "ພ້ອມລະບຸຕົວຢ່າງສິນຄ້າດ້ານນອກກ່ອງ" | ອັນ | **5.000** | | | 2 ຄັ້ງ (ຄັ້ງລະ 2.500) |
| 29 | ສະຕິກເກີ PVC ພິມ 4 ສີ + ແຜ່ນສະຕິກເກີໃສຕິດບາໂຄດ 7*7 ຊມ | ສະຕິກເກີ້(10,5*14,8 ຊມ), ແຜ່ນພິມ 7*7 ຊມ | ການຫຸ້ມຫໍ່: 100ຊຸດ/ແພັກ (05 ແພັກ/ມັດ) ຕິດລາຍລະອຽດສິນຄ້າທຸກແພັກ | ຊຸດ | **5.000** | | | 2 ຄັ້ງ (ຄັ້ງລະ 2.500) |
| 30 | ແບບຟອມໂອນເງິນດ່ວນ Moneygram (ຮັບ) | ເຈ້ຍເຄມີ 2 ໃບ/ຊຸດ, ຂະໜາດ 17,2 * 21,5 ຊມ, ພິມ 4 ສີ-ດ້ານໜ້າ, ດ້ານຫຼັງພິມ 4 ສີ (ທັງສອງໃບ) ກາວແຍກຊຸດ | 500 ຊຸດ/ຫໍ່, 5ຫໍ່/ມັດ | ຊຸດ | **300.000** | | | 2 ຄັ້ງ (ຄັ້ງລະ 150.000) |

| | | | | | | | | |
|---|---|---|---|---|---|---|---|---|
| 31 | ແບບຟອມໂອນເງິນດ່ວນ Moneygram (ຮັບ) | ເຈ້ຍເຄມີ 2 ໃບ/ຊຸດ, ຂະໜາດ 17,2 * 21,5 ຊມ, ພິມ 4 ສີ-ດ້ານໜ້າ, ດ້ານຫຼັງພິມ 1 ສີ (ທັງສອງໃບ) ກາວແຍກຊຸດ | 500 ຊຸດ/ຫໍ່, 5ຫໍ່/ມັດ | ຊຸດ | **300.000** | | | 2 ຄັ້ງ (ຄັ້ງລະ 150.000) |
| 32 | ປຶ້ມຝາກປະຫຍັດ (ສີຟ້າ) | 13*7,7 ຊມ. 28 ໜ້າ, ພິມ 4 ສີ ເຈ້ຍປອນ 100gsm, ໜ້າປົກເຈ້ຍລາຍຜ້າ OPALE 160gsm, ຫຍິບຝ້າຍກາວເຢັນ | 100 ຫົວ/ແພັກ, 10 ແພັກ/ແກັດ | ຫົວ | **300.000** | | | 2 ຄັ້ງ (ຄັ້ງລະ 150.000) |
| 33 | ປຶ້ມຝາກປະຫຍັດ (ສີຟ້າ) | 13*7,7 ຊມ. 28 ໜ້າ, ພິມ 4 ສີ ເຈ້ຍປອນ 100gsm, ໜ້າປົກເຈ້ຍລາຍຜ້າ OPALE 160gsm, ຫຍິບຝ້າຍກາວເຢັນ | 100 ຫົວ/ແພັກ, 10 ແພັກ/ແກັດ | ຫົວ | **600.000** | | | 4 ຄັ້ງ (ຄັ້ງລະ 150.000) |
| 34 | ປຶ້ມຝາກມີກຳນົດ (ສີຂາວ) | -ພິມປຶ້ມບັນຊີເງິນຝາກມີກຳນົດ ສີຂາວ ຂະໜາດ 15*08 ຊມ, ຈຳນວນໜ້າທັງໝົດແມ່ນ 20 ໜ້າ ລວມໜ້າປົກ.<br>-ໜ້າປົກ: ໃຊ້ເຈ້ຍອາດດ້ານ 160 ແກຼມ, ພິມ 04 ສີ 01 ໜ້າ ເຄືອບຢາງດ້ານ 01 ໜ້າ.<br>-ເນື້ອໃນ: ເນື້ອໃນໃຊ້ເຈ້ຍປອນ 100 ແກຼມ, ພິມ 01 ສີ 02 ໜ້າ, ຫຍິບດ້າຍ ແລະ ຕິດປົກ. | 100 ຫົວ/ແພັກ, 10 ແພັກ/ແກັດ | ຫົວ | **30.000** | | | |
| 35 | ປຶ້ມຝາກມີກຳນົດ (ສີຂາວ) | -ພິມປຶ້ມບັນຊີເງິນຝາກມີກຳນົດ ສີຂາວ ຂະໜາດ 15*08 ຊມ, ຈຳນວນໜ້າທັງໝົດແມ່ນ 20 ໜ້າ ລວມໜ້າປົກ.<br>-ໜ້າປົກ: ໃຊ້ເຈ້ຍອາດດ້ານ 160 ແກຼມ, ພິມ 04 ສີ 01 ໜ້າ ເຄືອບຢາງດ້ານ 01 ໜ້າ.<br>-ເນື້ອໃນ: ເນື້ອໃນໃຊ້ເຈ້ຍປອນ 100 ແກຼມ, ພິມ 01 ສີ 02 ໜ້າ, ຫຍິບດ້າຍ ແລະ ຕິດປົກ. | 100 ຫົວ/ແພັກ, 10 ແພັກ/ແກັດ | ຫົວ | **60.000** | | | 3 ຄັ້ງ (ຄັ້ງລະ 20.000) |
| 36 | ເຊືອກມັດເງິນ | ເຊືອກສີແດງ, ກວ້າງ 9*ໜາ*0,9 ມມ, ພິມໜັງສື+ໂລໂກ້ ທຄຕລ ສີຂາວ, ໜັກ 8ກລ/ກໍ້ | 2 ກໍ້/ມັດ | ກໍ້ | **400** | | | 2 ຄັ້ງ (ຄັ້ງລະ 200) |
| 37 | ເຊືອກມັດເງິນ | ເຊືອກສີແດງ, ກວ້າງ 9*ໜາ*0,9 ມມ, ພິມໜັງສື+ໂລໂກ້ ທຄຕລ ສີຂາວ, ໜັກ 8ກລ/ກໍ້ | 2 ກໍ້/ມັດ | ກໍ້ | **800** | | | 2 ຄັ້ງ (ຄັ້ງລະ 400) |
| 38 | ໃບມອບເງິນສົດ 3P | ເຈ້ຍເຄມີ 3 ໃບ/ຊຸດ, ຂະໜາດ 16*18,8 ຊມ, ພິມ 4 ສີ 01 ໜ້າ, ທາກາວແຍກຊຸດ | 500 ຊຸດ/ຫໍ່, 5ຫໍ່/ມັດ | ຊຸດ | 2.000.000 | | | 2 ຄັ້ງ (ຄັ້ງລະ 1.000.000) |
| 39 | ໃບມອບເງິນສົດ 3P | ເຈ້ຍເຄມີ 3 ໃບ/ຊຸດ, ຂະໜາດ 16*18,8 ຊມ, ພິມ 4 ສີ 01 ໜ້າ, ທາກາວແຍກຊຸດ | 501 ຊຸດ/ຫໍ່, 5ຫໍ່/ມັດ | ຊຸດ | 4.000.000 | | | 4 ຄັ້ງ (ຄັ້ງລະ 1.000.000) |
| 40 | ພິມແບບຟອມ ໃບຢັ້ງຢືນທຸລະກຳ ຂອງ ທຄຕລ | - ຂະໜາດ: 17.5 x 21 ຊມ<br>- ເຈ້ຍເຄມີ 2 ໃບ/ຊຸດ, (ຍີ່ຫໍ້ Oji ເກດ A), ພິມ 04 ສີ ທຸກໜ້າ, ຕິດກາວຫົວ 2 ໃບ/ຊຸດ. | -ການຫຸ້ມຫໍ່: 500 ຊຸດ/ຫໍ່, 05 ຫໍ່/ມັດ, ຕິດສິນຄ້າພ້ອມລາຍລະອຽດ. | ຊຸດ | **3.000.000** | | | 2 ຄັ້ງ (ຄັ້ງລະ 1.500.000) |
| 41 | ພິມແບບຟອມ ໃບຢັ້ງຢືນທຸລະກຳ ຂອງ ທຄຕລ | - ຂະໜາດ: 17.5 x 21 ຊມ<br>- ເຈ້ຍເຄມີ 2 ໃບ/ຊຸດ, (ຍີ່ຫໍ້ Oji ເກດ A), ພິມ 04 ສີ ທຸກໜ້າ, ຕິດກາວຫົວ 2 ໃບ/ຊຸດ. | -ການຫຸ້ມຫໍ່: 500 ຊຸດ/ຫໍ່, 05 ຫໍ່/ມັດ, ຕິດສິນຄ້າພ້ອມລາຍລະອຽດ. | ຊຸດ | **6.000.000** | | | 4 ຄັ້ງ (ຄັ້ງລະ 1.500.000) |

**ໝາຍເຫດ:**

- ຜູ້ທີ່ສົນໃຈເຂົ້າຮ່ວມປະມູນ ແມ່ນສາມາດເຂົ້າມາເບິ່ງສິນຄ້າຕົວຈິງຢູ່ ພະແນກຫ້ອງການບໍລິຫານການເງິນ ຊັ້ນ 4 ຕຶກ C.
- ສຳລັບຜູ້ທີ່ໄດ້ຮັບການຄັດເລືອກ ແມ່ນ ທຄຕລ ມີ Artwork ຂອງແບບຟອມ-ສິ່ງພິມໃຫ້.
- ການຈັດພິມບາງລາຍການ ແມ່ນ ທຄຕລ ຈະສັ່ງເປັນ 2-3 ຄັ້ງ ໄລຍະເວລາຫ່າງກັນ 3 ເດືອນ.